ສາລະບານ


ມະຕິຕົກລົງ ........................................ 4
ລັດຖະດຳລັດ ........................................ 5
ກົດໝາຍວ່າດ້ວຍ ຜັງເມືອງ ........................................ 6
ພາກທີ I ບົດບັນຍັດທົ່ວໄປ ........................................ 6
ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍ ຜັງເມືອງ ........................................ 6
ມາດຕາ 2. ການຜັງເມືອງ ........................................ 6
ມາດຕາ 3. ຕົວເມືອງ ........................................ 6
ມາດຕາ 4. ຫລັກການຂອງການວາງຜັງເມືອງ ........................................ 7
ມາດຕາ 5. ພັນທະໃນການປະຕິບັດຜັງເມືອງ ........................................ 7
ພາກທີ II ການວາງຜັງເມືອງ ........................................ 7
ມາດຕາ 6. ການວາງຜັງເມືອງ ........................................ 7
ມາດຕາ 7. ການວາງຜັງເມືອງລະດັບຊາດ ........................................ 8
ມາດຕາ 8. ການວາງຜັງເມືອງລະດັບພາກ ........................................ 8
ມາດຕາ 9. ການວາງຜັງເມືອງລະດັບແຂວງ ........................................ 8
ມາດຕາ 10. ການວາງຜັງເມືອງລະດັບຕົວເມືອງ ........................................ 9
ພາກທີ III ລະບຽບການຜັງເມືອງ ........................................ 9
ໝວດທີ 1 ລະບຽບການນຳໃຊ້ ທີ່ດິນຜັງເມືອງ ແລະ ການປຸກສ້າງ ........................................ 9
ມາດຕາ 11. ທີ່ດິນຜັງເມືອງ ........................................ 9
ມາດຕາ 12. ການສະຫງວນ ຫລືໂອນທີ່ດິນ ........................................ 9
ມາດຕາ 13. ການແບ່ງເຂດທີ່ດິນຜັງເມືອງ ........................................ 10
ມາດຕາ 14. ເຂດໃຈກາງຕົວເມືອງ ........................................ 10
ມາດຕາ 15. ເຂດອ້ອມໃຈກາງຕົວເມືອງ ........................................ 10
ມາດຕາ 16. ເຂດຊານເມືອງ ........................................ 11
ມາດຕາ 17. ເຂດຂະຫຍາຍຕົວເມືອງ ........................................ 11
ມາດຕາ 18. ຕົວເມືອງ ຫລື ເທດສະບານທີ່ຂຶ້ນກັບເມືອງ ........................................ 11
ມາດຕາ 19. ການນຳໃຊ້ທີ່ດິນຜັງເມືອງ ........................................ 11
ໝວດທີ 2 ການຈັດສັນເຂດລະອຽດ ........................................ 12
ມາດຕາ 20. ການຈັດສັນເຂດລະອຽດ ........................................ 12
ມາດຕາ 21. ການຈັດສັນເຂດທີ່ດິນສະເພາະໃນຕົວເມືອງ ........................................ 12
ມາດຕາ 22. ການຈັດສັນຄຸ້ມຄືນໃໝ່ ........................................ 12
ມາດຕາ 23. ການຈັດສັນຕອນດິນ ........................................ 12
ໝວດທີ 3 ຕົວເມືອງທີ່ສ້າງຕັ້ງກ່ອນມີຜັງເມືອງ, ທີ່ບໍ່ມີຜັງເມືອງ ແລະ ຕົວເມືອງທີ່ສ້າງຂຶ້ນໃໝ່ ........................................ 13
ມາດຕາ 24. ຕົວເມືອງທີ່ສ້າງຕັ້ງກ່ອນມີຜັງເມືອງ ........................................ 13

ມາດຕາ 25. ຕົວເມືອງທີ່ບໍ່ມີຜັງເມືອງ.......................................................................13
ມາດຕາ 26. ຕົວເມືອງທີ່ສ້າງຂຶ້ນໃໝ່ .......................................................................13
ໝວດທີ 4 ການອະນຸຍາດ ແລະ ການຄຸ້ມຄອງພາຍຫຼັງການປຸກສ້າງ ...................................13
ມາດຕາ 27. ການອະນຸຍາດປຸກສ້າງ ຫລືສ້ອມແປງໃຫຍ່ ...............................................13
ມາດຕາ 28. ໃບຢັ້ງຢືນຄວາມຖືກຕ້ອງຂອງການປຸກສ້າງ ຫລື ສ້ອມແປງ...............................13
ມາດຕາ 29. ການຄຸ້ມຄອງພາຍຫຼັງການປຸກສ້າງ ຫລືສ້ອມແປງ .......................................14
ມາດຕາ 30. ການອອກຂໍ້ກໍານົດລະອຽດ .......................................................................14
ພາກທີ IV ການລົງທຶນ ໃສ່ການກໍ່ສ້າງ ລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ .........14
ມາດຕາ 31. ຈຸດປະສົງຂອງການລົງທຶນ.......................................................................14
ມາດຕາ 32. ປະເພດຜູ້ລົງທຶນ .......................................................................14
ພາກທີ V ການຄຸ້ມຄອງ ແລະ ການກວດກາຜັງເມືອງ ...................................................14
ໝວດທີ 1 ອົງການຄຸ້ມຄອງຜັງເມືອງ.......................................................................14
ມາດຕາ 33. ອົງການຄຸ້ມຄອງຜັງເມືອງ.......................................................................14
ມາດຕາ 34. ສິດ ແລະ ໜ້າທີ່ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ...............15
ມາດຕາ 35. ສິດ ແລະ ໜ້າທີ່ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ແຂວງ, ກໍາແພງນະ ຄອນ ແລະ ເຂດພິເສດ .......................................................................15
ມາດຕາ 36. ສິດ ແລະ ໜ້າທີ່ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ..........................16
ມາດຕາ 37. ສິດ ແລະ ໜ້າທີ່ຂອງຫ້ອງການຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ .......16
ມາດຕາ 38. ສິດ ແລະ ໜ້າທີ່ ຂອງອໍານາດການປົກຄອງບ້ານ ..........................................16
ມາດຕາ 39. ການເຜີຍແຜ່ຜັງເມືອງ .......................................................................16
ໝວດທີ 2 ອົງການກວດກາຜັງເມືອງ.......................................................................16
ມາດຕາ 40. ຈຸດປະສົງການກວດກາຜັງເມືອງ .......................................................................16
ມາດຕາ 41. ອົງການກວດກາຜັງເມືອງ.......................................................................17
ມາດຕາ 42. ເນື້ອໃນ ແລະ ວິທີການກວດກາຜັງເມືອງ .......................................................17
ໝວດທີ 3 ການແກ້ໄຂຂໍ້ຂັດແຍ່ງ.......................................................................17
ມາດຕາ 43. ປະເພດຂໍ້ຂັດແຍ່ງ .......................................................................17
ມາດຕາ 44. ຂໍ້ຂັດແຍ່ງ ທາງດ້ານບໍລິຫານ .......................................................................17
ມາດຕາ 45. ຂໍ້ຂັດແຍ່ງ ທາງແພ່ງ .......................................................................17
ພາກທີ VI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ...........................................18
ມາດຕາ 46. ນະໂຍບາຍຕໍ່ຜູ້ມີຜົນງານ .......................................................................18
ມາດຕາ 47. ມາດຕະການຕໍ່ຜູ້ລະເມີດ .......................................................................18
ມາດຕາ 48. ມາດຕະການສຶກສາອົບຮົມ .......................................................................18
ມາດຕາ 49. ມາດຕະການໃຊ້ແທນຄ່າເສັຍຫາຍ.......................................................................18
ມາດຕາ 50. ມາດຕະການປັບໃໝ .......................................................................18

ມາດຕາ 51. ມາດຕະການທາງອາຍາ ....................................................................19
ມາດຕາ 52. ມາດຕະການໂທດເພີ້ມ ....................................................................19
ພາກທີ VII ບົດບັນຍັດສຸດທ້າຍ....................................................................19
ມາດຕາ 53. ການຈັດຕັ້ງປະຕິບັດ....................................................................19
ມາດຕາ 54. ຜົນສັກສິດ....................................................................19

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 03-99/ສພຊ

# ມະຕິຕົກລົງ

**ຂອງສະພາແຫ່ງຊາດແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການຕົກລົງຮັບຮອງເອົາກົດຫມາຍວ່າດ້ວຍຜັງເມືອງ

---

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດຫມາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 08/ນຍ, ລົງວັນທີ 8/3/1999;

ພາຍຫລັງທີ່ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງກ່ຽວກັບເນື້ອໃນຂອງກົດຫມາຍວ່າດ້ວຍ ຜັງເມືອງ ໃນກອງປະຊຸມເທື່ອທີ່ 3 ສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ IV, ໃນວາລະປະຊຸມຕອນບ່າຍຂອງວັນທີ 3 ເມສາ 1999.

ກອງປະຊຸມໄດ້ຕົກລົງ:

<u>**ມາດຕາ 1**</u>: ຮັບຮອງເອົາກົດຫມາຍວ່າດ້ວຍຜັງເມືອງດ້ວຍຄະແນນສຽງຢ່າງເປັນເອກະສັນ.

<u>**ມາດຕາ 2**</u>: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ວຽງຈັນ, ວັນທີ 3 ເມສາ 1999

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 11 ສປປ

# ລັດຖະດຳລັດ

## ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດ ໃຊ້ກົດໝາຍວ່າດ້ວຍ ຜັງເມືອງ

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໝວດທີ່ V ມາດຕາ 53, ຂໍ້ 1;
- ອີງຕາມມະຕິຕົກລົງຂອງກອງປະຊຸມເທື່ອທີ່ 3 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ IV ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍຜັງເມືອງ ສະບັບເລກທີ 03 - 99/ ສພຊ ລົງວັນທີ 3 ເມສາ 1999;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ, ລົງວັນທີ 6 ເມສາ 1999.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ.

**ມາດຕາ 1**: ປະກາດໃຊ້ກົດໝາຍວ່າດ້ວຍ ຜັງເມືອງ

**ມາດຕາ 2**: ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 26 ເມສາ 1999

ປະທານປະເທດແຫ່ງ ສ ປປ ລາວ

ຄຳໄຕ ສີພັນດອນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 03/99/ສພຊ.

ວັນທີ 3/4/1999

# ກົດໝາຍວ່າດ້ວຍ ຜັງເມືອງ

ພາກທີ I ບົດບັນຍັດທົ່ວໄປ

## ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍ ຜັງເມືອງ

ກົດໝາຍວ່າດ້ວຍ ຜັງເມືອງ ກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ການນຳໃຊ້ທີ່ດິນ, ການກໍ່ສ້າງ ແລະ ການປຸກສ້າງໃນຂອບເຂດທົ່ວປະເທດ ແລະ ລະດັບທ້ອງຖິ່ນໃຫ້ຖືກຕ້ອງ ຕາມນະໂຍບາຍແລະກົດໝາຍ ແນໃສ່ພັດທະນາຕົວເມືອງໃຫ້ໄປຕາມທິດທາງຂອງແຜນການພັດທະນາເສດຖະກິດ - ສັງຄົມ, ຮັບປະກັນທຸກການເຄື່ອນໄຫວຂອງສັງຄົມໃນຕົວເມືອງໃຫ້ມີຄວາມສະຫງົບ, ຄວາມປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ມີສຸຂານາໄມ, ມີຄວາມສີວິໄລ, ຮັກສາບູຮານສະຖານ, ສະຖາປັດຕະຍະກຳຂອງພື້ນຖານວັດທະນະທຳ ທັງຮັກສາສິ່ງແວດລ້ອມ ແລະ ທິວທັດທຳມະຊາດ.

## ມາດຕາ 2. ການຜັງເມືອງ

ການຜັງເມືອງ ແມ່ນການຈັດສັນ ແລະ ພັດທະນາຕົວເມືອງ ລວມທັງການວາງລະບຽບການ ແລະ ມາດຕະການທາງດ້ານບໍລິຫານ, ເຕັກນິກ,ເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມໃຫ້ກົມກຽວກັນ,ສົມເຫດສົມຜົນ ແລະ ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ຜັງເມືອງປະກອບດ້ວຍແຜນຜັງ, ບົດວິພາກ ແລະ ລະບຽບການກ່ຽວກັບການຄຸ້ມຄອງຕົວເມືອງ.

## ມາດຕາ 3. ຕົວເມືອງ

ຕົວເມືອງຕາມກົດໝາຍສະບັບນີ້ ແມ່ນສະຖານທີ່ດຳລົງຊີວິດຂອງຊຸມຊົນຕາມລັກສະນະດັ່ງນີ້:

- ເປັນທີ່ຕັ້ງ ນະຄອນຫລວງຂອງປະເທດ, ກຳແພງນະຄອນ, ເທດສະບານແຂວງ, ເທດສະບານເຂດພິເສດ, ເທດສະບານເມືອງ, ເຂດຈຸດສຸມເສດຖະກິດ - ສັງຄົມ;
- ມີປະຊາກອນໜາແໜ້ນພໍສົມຄວນ;

- ມີລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ ເຊັ່ນ: ຖະໜົນຫົນທາງ, ລະບົບລະບາຍນ້ຳ,ໂຮງໝໍ,ໂຮງຮຽນ, ເດີ່ນກິລາ, ສວນສາທາລະນະ, ນ້ຳປະປາ,ໄຟຟ້າ,ໂທລະສັບ ແລະ ອື່ນໆ.

ຕົວເມືອງ ແບ່ງອອກເປັນ ສາມລະດັບຄື :

1. ຕົວເມືອງທີ່ຂຶ້ນກັບສູນກາງ;
2. ຕົວເມືອງທີ່ຂຶ້ນກັບແຂວງ,ກຳແພງນະຄອນ ແລະ ເຂດພິເສດ;
3. ຕົວເມືອງທີ່ຂຶ້ນກັບເມືອງ.

### ມາດຕາ 4. ຫລັກການຂອງການວາງຜັງເມືອງ

ການວາງຜັງເມືອງ ຕ້ອງວາງເປັນລະບົບ ແລະ ມີການປະສານສົມທົບຢ່າງກົມກຽວກັນລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ, ອຳນາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນ.

ການວາງຜັງເມືອງຕ້ອງໃຫ້ແທດເໝາະກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງແຕ່ລະບໍລິເວນ, ຮັບປະກັນ ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ມີສຸຂານາໄມ, ຄວາມສະດວກ, ຄວາມສະອາດ, ຄວາມສວຍງາມ ແລະ ມູນເຊື້ອວັດທະນະທຳຂອງບັນດາເຜົ່າ, ຂອງຊາດແລະສິ່ງແວດລ້ອມ.

ຜັງເມືອງລະດັບຕົວເມືອງ ຕ້ອງສອດຄ່ອງກັບຜັງເມືອງລະດັບແຂວງ, ຜັງເມືອງລະດັບແຂວງຕ້ອງສອດຄ່ອງກັບຜັງເມືອງລະດັບພາກ ແລະ ຜັງເມືອງລະດັບພາກຕ້ອງສອດຄ່ອງກັບຜັງເມືອງລະດັບຊາດ.

### ມາດຕາ 5. ພັນທະໃນການປະຕິບັດຜັງເມືອງ

ບຸກຄົນແລະການຈັດຕັ້ງ ນັບທັງພາຍໃນ ແລະ ຕ່າງປະເທດທີ່ຢູ່ ສປປລາວ ລ້ວນແຕ່ມີພັນທະໃນການປະຕິ ບັດຜັງເມືອງທີ່ວາງອອກຢ່າງເຂັ້ມງວດ.

## ພາກທີ II ການວາງຜັງເມືອງ

### ມາດຕາ 6. ການວາງຜັງເມືອງ

ການວາງຜັງເມືອງ ມີ ສີ່ ລະດັບຄື:

1. ຜັງເມືອງລະດັບຊາດ;
2. ຜັງເມືອງລະດັບພາກ;
3. ຜັງເມືອງລະດັບແຂວງ;
4. ຜັງເມືອງລະດັບຕົວເມືອງ.

### ມາດຕາ 7. ການວາງຜັງເມືອງລະດັບຊາດ

ການວາງຜັງເມືອງລະດັບຊາດ ແມ່ນການວາງທິດທາງລວມໄລຍະຍາວ ແລະ ໄລຍະກາງ ໃນຂອບເຂດທົ່ວປະເທດ ກ່ຽວກັບການກຳນົດເຂດ ທີ່ຈະສ້າງ ແລະ ຂະຫຍາຍຕົວເມືອງ, ເຂດຈຸດສຸມດ້ານເສດຖະກິດ-ວັດທະນະທຳສັງຄົມ, ເຂດປ່າໄມ້ ແລະ ປ່າສະຫງວນ, ເຂດຊັບພະຍາກອນທຳມະຊາດອື່ນໆ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຕາໜ່າງເສັ້ນທາງ ແລະ ອື່ນໆ ໂດຍອີງໃສ່ຈຸດພິເສດທາງດ້ານພູມສາດ, ປະຊາກອນ, ຊັບພະຍາກອນທຳມະຊາດ, ເສດຖະກິດ ແລະ ສາຍພົວພັນລະຫວ່າງພາກສ່ວນຕ່າງໆຂອງປະເທດ.

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄົ້ນຄ້ວາສ້າງຜັງເມືອງລະດັບຊາດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນແລ້ວນຳສະເໜີລັດຖະບານເພື່ອພິຈາລະນາຕົກລົງ ແລະ ນຳສະເໜີສະພາແຫ່ງຊາດເພື່ອພິຈາລະນາຮັບຮອງເອົາ.

### ມາດຕາ 8. ການວາງຜັງເມືອງລະດັບພາກ

ການວາງຜັງເມືອງລະດັບພາກ ແມ່ນການວາງທິດທາງໃຫຍ່ໄລຍະຍາວ ແລະ ໄລຍະກາງໃນພາກໃດພາກໜຶ່ງຂອງປະເທດ ກ່ຽວກັບການກຳນົດເຂດ ທີ່ຈະສ້າງ ແລະ ຂະຫຍາຍຕົວເມືອງ,ເຂດຈຸດສຸມດ້ານເສດຖະກິດ-ວັດທະນະທຳສັງຄົມ, ເຂດປ່າໄມ້ ແລະ ປ່າສະຫງວນ, ເຂດຊັບພະຍາກອນທຳມະຊາດອື່ນໆ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຕາໜ່າງເສັ້ນທາງ ແລະ ອື່ນໆ ໂດຍອີງໃສ່ຈຸດພິເສດທາງດ້ານພູມສາດ, ປະຊາກອນ, ຊັບພະຍາກອນທຳມະຊາດ, ເສດຖະກິດ ແລະ ມີລັກສະນະລະອຽດກວ່າຜັງເມືອງລະດັບຊາດ.

ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄົ້ນຄ້ວາສ້າງຜັງເມືອງລະດັບພາກໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນແລ້ວນຳສະເໜີລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

### ມາດຕາ 9. ການວາງຜັງເມືອງລະດັບແຂວງ

ການວາງຜັງເມືອງລະດັບແຂວງ ແມ່ນການວາງທິດທາງຕົ້ນຕໍໄລຍະຍາວ ແລະ ໄລຍະກາງໃນຂອບເຂດແຂວງໃດແຂວງໜຶ່ງຂອງປະເທດ ກ່ຽວກັບການກຳນົດເຂດທີ່ຈະສ້າງ ແລະ ຂະຫຍາຍຕົວເມືອງ, ເຂດຈຸດສຸມດ້ານເສດຖະກິດ-ວັດທະນະທຳ ສັງຄົມ, ເຂດປ່າໄມ້ ແລະ ປ່າສະຫງວນ, ເຂດຊັບພະຍາກອນທຳມະຊາດອື່ນໆ, ຕາໜ່າງເສັ້ນທາງ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ອື່ນໆ ໂດຍອີງໃສ່ຈຸດພິເສດທາງດ້ານພູມສາດ, ປະຊາກອນ, ຊັບພະຍາກອນທຳມະຊາດ, ເສດຖະກິດ ແລະມີລັກສະນະລະອຽດກວ່າຜັງເມືອງລະດັບພາກ.

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄົ້ນຄ້ວາສ້າງຜັງເມືອງລະດັບແຂວງ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນແລ້ວນຳສະເໜີ ລັດຖະບານ ເພື່ອພິ ຈາລະນາຮັບຮອງເອົາ.

### ມາດຕາ 10. ການວາງຜັງເມືອງລະດັບຕົວເມືອງ

ການວາງຜັງເມືອງລະດັບຕົວເມືອງ ແມ່ນການກຳນົດພື້ນທີ່ດິນກ່ຽວກັບການສ້າງ ແລະ ຂະຫຍາຍຕົວເມືອງ ໂດຍຈັດສັນເປັນເຂດທີ່ຢູ່ອາໄສ,ເຂດສຳນັກງານອົງການ, ເຂດກະສິກຳ, ເຂດອຸດສາຫະກຳ, ເຂດການຄ້າ ແລະການບໍລິການ, ເຂດເສັ້ນທາງຄົມມະນາຄົມແລະການຂົນສົ່ງ, ເຂດວັດທະນະທຳ ແລະກິລາ, ສວນສາທາລະນະ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດສາທາລະນະປະໂຫຍດ, ສາທາລະນູປະໂພກ ແລະອື່ນໆ.

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄົ້ນຄ້ວາສ້າງຜັງເມືອງລະດັບຕົວເມືອງໃຫຍ່ທີ່ຂຶ້ນກັບສູນກາງ ໂດຍປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ, ອຳນາດການປົກຄອງແຂວງ, ກຳແພງນະຄອນ ຫລືເຂດພິເສດ ແລະນຳໄປປຶກສາຫາລືຄຳຄິດຄຳເຫັນຂອງປະຊາຊົນ ແລ້ວນຳສະເໜີລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

ອຳນາດການປົກຄອງແຂວງ, ກຳແພງນະຄອນ ຫລື ເຂດພິເສດ ເປັນຜູ້ຄົ້ນຄ້ວາ ສ້າງຜັງເມືອງລະດັບຕົວເມືອງທີ່ຂຶ້ນກັບແຂວງ ກຳແພງນະຄອນ ຫລື ເຂດພິເສດ ໂດຍປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ນຳໄປປຶກສາຫາລືຄຳຄິດຄຳເຫັນຂອງປະຊາຊົນ ແລ້ວນຳສະເໜີ ກະຊວງ ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເພື່ອພິຈາລະນາຮັບຮອງເອົາ.

ອຳນາດການປົກຄອງເມືອງ ເປັນຜູ້ຄົ້ນຄ້ວາສ້າງຜັງເມືອງລະດັບຕົວເມືອງ ທີ່ຂຶ້ນກັບເມືອງ, ເຂດຈຸດສຸມທາງດ້ານເສດຖະກິດ-ສັງຄົມທີ່ຂຶ້ນກັບເມືອງ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ນຳໄປປຶກສາຫາລືຄຳຄິດຄຳເຫັນຂອງປະຊາຊົນ ແລ້ວນຳສະເໜີອຳນາດການປົກຄອງແຂວງ, ກຳແພງນະຄອນ ຫລື ເຂດພິເສດ ເພື່ອພິຈາລະນາຮັບຮອງເອົາ.

## ພາກທີ III ລະບຽບການຜັງເມືອງ

## ໝວດທີ 1 ລະບຽບການນຳໃຊ້ ທີ່ດິນຜັງເມືອງ ແລະ ການປຸກສ້າງ

### ມາດຕາ 11. ທີ່ດິນຜັງເມືອງ

ທີ່ດິນຜັງເມືອງ ແມ່ນຂອບເຂດພື້ນທີ່ດິນ ຊຶ່ງກຳນົດໄວ້ສຳລັບການວາງແຜນຜັງເມືອງເພື່ອພັດທະນາໃຫ້ເປັນຕົວເມືອງ. ຂອບເຂດພື້ນທີ່ດິນວາງແຜນຜັງເມືອງ ປະກອບດ້ວຍທີ່ດິນຂອງລັດ, ຂອງລວມໝູ່, ຂອງການຈັດ ຕັ້ງອື່ນ ຫລື ຂອງບຸກຄົນ.

### ມາດຕາ 12. ການສະຫງວນ ຫລືໂອນທີ່ດິນ

ລັດມີສິດສະຫງວນ ຫລື ໂອນທີ່ດິນ ເພື່ອມາຮັບໃຊ້ຜົນປະໂຫຍດລວມ ແລະ ການພັດທະນາໃນອະນາຄົດ ເຊັ່ນ: ການສ້າງເຂດຊຸມຊົນໃໝ່, ຖະໜົນຫົນທາງ, ເຂດອຸດສາຫະກຳ, ເຂດກະສິກຳ, ເຂດປ່າສະຫງວນ, ເຂດທ່ອງທ່ຽວ, ເຂດປ້ອງກັນຊາດ -ປ້ອງກັນຄວາມສະຫງົບ ແລະອື່ນໆ.

ການໂອນທີ່ດິນ ຂອງການຈັດຕັ້ງ ຫລື ບຸກຄົນ ທີ່ມີການພັດທະນາແລ້ວ ເພື່ອມາຮັບໃຊ້ສາທາລະນະປະໂຫຍດນັ້ນ ລັດຈະຕ້ອງທົດແທນຄືນຕາມຄວາມເໝາະສົມ.

## ມາດຕາ 13. ການແບ່ງເຂດທີ່ດິນຜັງເມືອງ

ຜັງເມືອງຂອງຕົວເມືອງປະກອບດ້ວຍ ເຂດຕ່າງໆດັ່ງນີ້: ເຂດທີ່ພັກພາອາໄສ, ເຂດສຳນັກງານອົງການ, ເຂດການຄ້າ, ການບໍລິການ, ເຂດສວນສາທາລະນະ, ເຂດອະນຸລັກມໍລະດົກ, ເຂດວັດທະນະທຳ-ສັງຄົມ, ເຂດທ່ອງທ່ຽວ, ເຂດກະສິກຳ,ເຂດອຸດສະຫະກຳ, ເຂດປ້ອງກັນຊາດ -ປ້ອງກັນຄວາມສະຫງົບ ແລະ ອື່ນໆ.

ທີ່ດິນຜັງເມືອງລະດັບຕົວເມືອງ ແບ່ງອອກດັ່ງນີ້ :

ຕົວເມືອງຫລືເທດສະບານທີ່ຂຶ້ນກັບສູນກາງ ຫລືຂຶ້ນກັບແຂວງ ຊຶ່ງແບ່ງອອກເປັນ ສີ່ ເຂດຄື :

1. ເຂດໃຈກາງຕົວເມືອງ;
2. ເຂດອ້ອມໃຈກາງຕົວເມືອງ;
3. ເຂດຊານເມືອງ;
4. ເຂດຂະຫຍາຍຕົວເມືອງ.

ຕົວເມືອງ ຫລື ເທດສະບານທີ່ຂຶ້ນກັບເມືອງ ແບ່ງອອກເປັນ ສອງເຂດ ຄື :

1. ເຂດໃຈກາງຕົວເມືອງ;
2. ເຂດຂະຫຍາຍຕົວເມືອງ.

## ມາດຕາ 14. ເຂດໃຈກາງຕົວເມືອງ

ເຂດໃຈກາງຕົວເມືອງ ແມ່ນເຂດທີ່ມີຄວາມໜາແໜ້ນດ້ານສິ່ງກໍ່ສ້າງ ແລະ ດ້ານປະຊາກອນສູງກ່ວາເຂດອື່ນ ມີລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກຄົບຊຸດ ທັງເປັນສູນການຄ້າ, ການບໍລິການ, ການດຳເນີນທຸລະກິດອື່ນໆ. ຍົກເວັ້ນການດຳເນີນກິດຈະການໂຮງງານອຸດສາຫະກຳທັງສາມລະດັບ ຫລື ສາງທີ່ມີເນື້ອທີ່ກ້ວາງຂວາງ.

ເຂດໃຈກາງຕົວເມືອງ ປະກອບດ້ວຍທີ່ດິນສຳລັບປຸກສ້າງທີ່ຢູ່ອາໄສ, ສະຖານທີ່ການຄ້າ, ການບໍລິການ ສຳນັກງານອົງການ ແລະ ອື່ນໆ.

## ມາດຕາ 15. ເຂດອ້ອມໃຈກາງຕົວເມືອງ

ເຂດອ້ອມໃຈກາງຕົວເມືອງ ແມ່ນເຂດທີ່ມີຄວາມໜາແໜ້ນຂອງສິ່ງກໍ່ສ້າງ ແລະ ດ້ານປະຊາກອນຕ່ຳກວ່າເຂດໃຈກາງຕົວເມືອງ, ມີເຂດຂຽວ ແລະ ມີລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ ທັງເປັນເຂດການຄ້າ, ການບໍລິການ, ການດຳເນີນທຸລະກິດອື່ນໆ. ຍົກເວັ້ນການດຳເນີນກິດຈະການໂຮງງານອຸດສາຫະກຳລະດັບໜຶ່ງ ແລະ ລະດັບສອງ.

ເຂດອ້ອມໃຈກາງຕົວເມືອງ ປະກອບດ້ວຍທີ່ດິນ ສຳລັບປຸກສ້າງທີ່ຢູ່ອາໄສ, ສະຖານທີ່ການຄ້າ, ການບໍລິການ, ສຳນັກງານອົງການ, ສະໜາມກິລາ, ສວນສາທາລະນະ, ສະຖານທີ່ວັດທະນະທຳ-ສັງຄົມ ແລະ ອື່ນໆ.

### ມາດຕາ 16. ເຂດຊານເມືອງ

ເຂດຊານເມືອງ ແມ່ນເຂດທີ່ຢູ່ອ້ອມຮອບເຂດອ້ອມໃຈກາງຕົວເມືອງ, ເປັນເຂດທີ່ມີຄວາມໜາແໜ້ນ ຂອງສິ່ງກໍ່ສ້າງ ຕ່ຳກວ່າເຂດອ້ອມຮອບໃຈກາງຕົວເມືອງ, ມີກິດຈະການກະສິກຳ, ຫັດຖະກຳແລະໂຮງງານອຸດສາຫະກຳລະດັບສອງ ແລະ ລະດັບສາມ ລວມທັງມີເຂດຫວ່າງເປົ່າຫລາຍສົມຄວນ.

ເຂດຊານເມືອງ ປະກອບດ້ວຍທີ່ດິນສຳລັບປຸກສ້າງທີ່ຢູ່ອາໄສ, ສຳນັກງານອົງການ,ສະຖານທີ່ການຫັດຖະກຳ, ອຸດສະຫະກຳຂະໜາດນ້ອຍ ແລະຂະໜາດກາງ ລວມທັງສາງທີ່ມີເນື້ອທີ່ກວ້າງຂວາງ ແລະ ອື່ນໆ.

### ມາດຕາ 17. ເຂດຂະຫຍາຍຕົວເມືອງ

ເຂດຂະຫຍາຍຕົວເມືອງ ແມ່ນເຂດທີ່ຕໍ່ຈາກເຂດຊານເມືອງອອກໄປ ຊຶ່ງຈັດສັນໄວ້ເພື່ອຮັບປະກັນການຂະຫຍາຍຂອງຕົວເມືອງ, ການເພີ່ມຂຶ້ນຂອງປະຊາກອນ ແລະ ກິດຈະການເສດຖະກິດ-ສັງຄົມ.

ເຂດຂະຫຍາຍຕົວເມືອງ ປະກອບດ້ວຍທີ່ດິນ ສຳລັບປຸກສ້າງທີ່ຢູ່ອາໄສ, ສະຖາບັນການສຶກສາ, ສະໜາມບິນ, ການຄ້າ, ການບໍລິການ, ການຫັດຖະກຳ, ກິດຈະການໂຮງງານອຸດສະຫະກຳລະດັບໜຶ່ງ, ການຂົນສົ່ງ ລວມທັງທີ່ດິນສຳລັບກະສິກຳ, ປ່າໄມ້ເພື່ອການພັກຜ່ອນ, ທ່ອງທ່ຽວ ແລະອື່ນໆ.

### ມາດຕາ 18. ຕົວເມືອງ ຫລື ເທດສະບານທີ່ຂຶ້ນກັບເມືອງ

ເຂດໃຈກາງຕົວເມືອງ ຫລືເທດສະບານທີ່ຂຶ້ນກັບເມືອງ ແມ່ນມີລັກສະນະຄ້າຍຄືກັນກັບເຂດອ້ອມໃຈກາງຕົວເມືອງທີ່ຂຶ້ນກັບສູນກາງ ຫລືແຂວງ.

ເຂດໃຈກາງຕົວເມືອງ ຫລື ເທດສະບານທີ່ຂຶ້ນກັບເມືອງປະກອບດ້ວຍທີ່ດິນສຳລັບປຸກສ້າງທີ່ຢູ່ອາໄສ,ສຳນັກງານອົງການ,ການຄ້າ, ການບໍລິການ, ກິດຈະການຫັດຖະກຳ, ກະສິກຳ,ອຸດສາຫະກຳຂະໜາດນ້ອຍ, ຂະໜາດກາງ ແລະອື່ນໆ.

ເຂດຂະຫຍາຍຕົວເມືອງ ແມ່ນເຂດທີ່ຈັດສັນໄວ້ເພື່ອຮັບປະກັນ ການຂະຫຍາຍຂອງຕົວເມືອງ ແລະ ການເພີ່ມຂຶ້ນຂອງປະຊາກອນ ແລະ ກິດຈະການເສດຖະກິດ - ສັງຄົມ.

ເຂດຂະຫຍາຍຕົວເມືອງ ປະກອບດ້ວຍທີ່ດິນສຳລັບປຸກສ້າງທີ່ຢູ່ອາໄສ, ສະຖາບັນການສຶກສາ, ສະໜາມບິນ, ການຄ້າ, ການບໍລິການ, ການຫັດຖະກຳ, ກິດຈະການໂຮງງານອຸດສາຫະກຳລະດັບໜຶ່ງ, ການຂົນສົ່ງ, ລວມທັງທີ່ດິນ ສຳລັບກະສິກຳ, ປ່າໄມ້ເພື່ອການພັກຜ່ອນ, ທ່ອງທ່ຽວ ແລະ ອື່ນໆ.

### ມາດຕາ 19. ການນຳໃຊ້ທີ່ດິນຜັງເມືອງ

ການນຳໃຊ້ທີ່ດິນຜັງເມືອງຕ້ອງໃຫ້ຖືກຕ້ອງກັບປະເພດທີ່ດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ.

ທີ່ຢູ່ອາໄສ ແລະສຳນັກງານອົງການ ແມ່ນເລັ່ງໃສ່ປຸກສ້າງ ໃນເຂດທີ່ເປັນດິນໂນນ.

ຮ້ານຄ້າ, ສະຖານທີ່ບໍລິການ ແລະທຸລະກິດອື່ນໆ ຕາມຫລັກການ ແມ່ນປຸກສ້າງໃນເຂດຊຸມຊົນທີ່ມີການພົວພັນດ້ານທຸລະກິດ, ຂົນສົ່ງເຂົ້າ-ອອກ ສະດວກສະບາຍ. ທຸກກິດຈະການກໍ່ສ້າງເພື່ອຮັບໃຊ້ມວນຊົນ ຕ້ອງມີສະຖານທີ່ຈອດລົດ.

ທີ່ດິນກະສິກຳຕ້ອງກຳນົດໃສ່ບ່ອນທີ່ຮາບພຽງ, ດິນເນີນ ແລະ ສະຫງວນໄວ້ສຳລັບການຜະລິດກະສິກຳ.

ກິດຈະການອຸດສາຫະກຳ ແມ່ນໃຫ້ດຳເນີນການກໍ່ສ້າງໃນບ່ອນທີ່ບໍ່ມີຊຸມຊົນແອອັດ, ມີສະຖານທີ່ກວ້າງຂວາງ,ຮັບປະກັນຄວາມປອດໄພ ແລະສິ່ງແວດລ້ອມ.

## ໝວດທີ 2 ການຈັດສັນເຂດລະອຽດ

### ມາດຕາ 20. ການຈັດສັນເຂດລະອຽດ

ນອກຈາກສີ່ເຂດທີ່ໄດ້ກຳນົດໄວ້ໃນມາດຕາ 13 ເທິງນີ້ ແລ້ວຍັງຈະຕ້ອງໄດ້ຈັດສັນການນຳໃຊ້ທີ່ດິນສຳລັບການປຸກສ້າງແລະກໍ່ສ້າງ ໃຫ້ເປັນເຂດລະອຽດຕື່ມອີກ ຊຶ່ງປະກອບມີສາມປະເພດ ຄື :

1. ການຈັດສັນເຂດທີ່ດິນສະເພາະໃນຕົວເມືອງ;
2. ການຈັດສັນຄຸ້ມຄືນໃໝ່;
3. ການຈັດສັນຕອນດິນ.

### ມາດຕາ 21. ການຈັດສັນເຂດທີ່ດິນສະເພາະໃນຕົວເມືອງ

ການຈັດສັນເຂດທີ່ດິນສະເພາະໃດໜຶ່ງໃນຕົວເມືອງ ແມ່ນການຈັດສັນທີ່ດິນສະເພາະ ທີ່ຢູ່ໃນຂອບເຂດພື້ນ ທີ່ດິນຈຳກັດໃດໜຶ່ງຂອງຜັງເມືອງ ເພື່ອສ້າງ ແລະ ຂະຫຍາຍລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ ແລະ ກິດຈະການເສດຖະກິດ-ສັງຄົມອື່ນໆ.

ຜັງເມືອງໜຶ່ງ ອາດຈະມີແຜນຈັດສັນເຂດທີ່ດິນສະເພາະອັນໜຶ່ງ ຫລື ຫລາຍອັນແລ້ວແຕ່ຄວາມຈຳເປັນ.

### ມາດຕາ 22. ການຈັດສັນຄຸ້ມຄືນໃໝ່

ການຈັດສັນຄຸ້ມຄືນໃໝ່ ແມ່ນການຈັດສັນ, ປັບປຸງບູລະນະຄຸ້ມທີ່ບໍ່ໄດ້ມາດຕະຖານຕາມທີ່ໄດ້ກຳນົດໄວ້ໃນລະບຽບການນຳໃຊ້ທີ່ດິນຂອງເຂດທີ່ມີຜັງເມືອງ.

### ມາດຕາ 23. ການຈັດສັນຕອນດິນ

ການຈັດສັນຕອນດິນ ແມ່ນການຈັດແບ່ງຕອນດິນເພື່ອຮັບປະກັນ ໃຫ້ຕົວເມືອງມີຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສວຍງາມ, ຄວາມສະດວກ ແລະໃຫ້ຖືກຕ້ອງຕາມຜັງເມືອງ.

## ໝວດທີ 3 ຕົວເມືອງທີ່ສ້າງຕັ້ງກ່ອນມີຜັງເມືອງ, ທີ່ບໍ່ມີຜັງເມືອງ ແລະ ຕົວເມືອງທີ່ສ້າງຂຶ້ນໃໝ່

### ມາດຕາ 24. ຕົວເມືອງທີ່ສ້າງຕັ້ງກ່ອນມີຜັງເມືອງ

ການວາງແຜນຜັງເມືອງສຳລັບຕົວເມືອງທີ່ສ້າງຕັ້ງກ່ອນ ມີຜັງເມືອງ ຕ້ອງອີງໃສ່ສະພາບຕົວຈິງຂອງຕົວເມືອງນັ້ນ ໂດຍຄຳ ນຶງເຖິງສິ່ງກໍ່ສ້າງທີ່ມີຄຸນຄ່າທາງດ້ານສະຖາປັດຕະຍະກຳ ແລະ ວັດທະນະທຳທີ່ມີຢູ່ແລ້ວ, ຊຶ່ງແບ່ງເປັນ ສາມຢ່າງ ຄື:

1. ສິ່ງທີ່ຄວນຮັກສາໄວ້;
2. ສິ່ງທີ່ຄວນປັບປຸງໃຫມ່;
3. ສິ່ງທີ່ຄວນກໍ່ສ້າງຂຶ້ນໃໝ່.

### ມາດຕາ 25. ຕົວເມືອງທີ່ບໍ່ມີຜັງເມືອງ

ສຳລັບຕົວເມືອງ ທີ່ຍັງບໍ່ທັນມີຜັງເມືອງນັ້ນ ຕ້ອງມີແຜນການສຳຫລວດອອກແບບຜັງເມືອງ. ສ່ວນການປຸກສ້າງ ແລະ ກໍ່ສ້າງ ແມ່ນໃຫ້ປະຕິບັດຕາມລະບຽບການທີ່ກະຊວງ ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ວາງອອກ.

### ມາດຕາ 26. ຕົວເມືອງທີ່ສ້າງຂຶ້ນໃໝ່

ສຳລັບຕົວເມືອງທີ່ຈະສ້າງຂຶ້ນໃໝ່ນັ້ນຕ້ອງສ້າງຜັງເມືອງກ່ອນ. ສ່ວນການປຸກສ້າງ ແລະ ກໍ່ສ້າງຕ່າງໆນັ້ນ ຕ້ອງປະຕິບັດຕາມລະບຽບການຂອງຜັງເມືອງທີ່ວາງອອກຢ່າງເຂັ້ມງວດ.

## ໝວດທີ 4 ການອະນຸຍາດ ແລະ ການຄຸ້ມຄອງພາຍຫຼັງການປຸກສ້າງ

### ມາດຕາ 27. ການອະນຸຍາດປຸກສ້າງ ຫລືສ້ອມແປງໃຫຍ່

ການອອກໃບອະນຸຍາດປຸກສ້າງ ຫລື ສ້ອມແປງໃຫຍ່ ແມ່ນອອກໃຫ້ທຸກກິດຈະການທີ່ຂໍອະນຸຍາດປຸກ ສ້າງ ຫລື ສ້ອມແປງໃຫຍ່ ຊຶ່ງຖືກຕ້ອງກັບລະບຽບຜັງເມືອງ ເຊັ່ນ :

- ການປຸກສ້າງ;
- ການສ້ອມແປງອາຄານ (ການປ່ຽນແປງ, ການທັບມ້າງທັງໝົດ ຫລື ບາງສ່ວນ );
- ການຂຸດດິນ ຫລື ການຖົມດິນ;
- ການຕິດຕັ້ງເສົາໄຟຟ້າ, ເສົາໂທລະສັບ, ເສົາອາກາດຂະໜາດໃຫຍ່, ອ່າງເກັບນ້ຳສູງ, ຂົວຂ້າມທາງ ແລະ ອື່ນໆ ທີ່ຖືກຕ້ອງຕາມລະບຽບການ ຂອງຜັງເມືອງວາງອອກ.

### ມາດຕາ 28. ໃບຢັ້ງຢືນຄວາມຖືກຕ້ອງຂອງການປຸກສ້າງ ຫລື ສ້ອມແປງ

ພາຍຫຼັງການປຸກສ້າງ ຫລື ສ້ອມແປງສຳເລັດ ອົງການຄຸ້ມຄອງຜັງເມືອງ ທີ່ກ່ຽວຂ້ອງຕ້ອງດຳເນີນການກວດກາ ເມື່ອເຫັນວ່າສິ່ງປຸກສ້າງ ຫລື ສ້ອມແປງນັ້ນຖືກຕ້ອງ ຕາມການອອກແບບ ແລະ ຕາມລະບຽບການຂອງຜັງເມືອງແລ້ວຈຶ່ງອອກໃບຢັ້ງຢືນຄວາມຖືກຕ້ອງໃຫ້.

**ມາດຕາ 29. ການຄຸ້ມຄອງພາຍຫຼັງການປຸກສ້າງ ຫລືສ້ອມແປງ**

ພາຍຫຼັງການປຸກສ້າງ ຫລື ສ້ອມແປງແລ້ວ ອົງການຄຸ້ມຄອງຜັງເມືອງທີ່ກ່ຽວຂ້ອງຕ້ອງໄດ້ຕິດຕາມ ແລະ ກວດກາຄືນ ເພື່ອບໍ່ໃຫ້ສິ່ງປຸກສ້າງ ຫລື ສ້ອມແປງ ດັ່ງກ່າວລະເມີດລະບຽບການຂອງຜັງເມືອງ.

**ມາດຕາ 30. ການອອກຂໍ້ກຳນົດລະອຽດ**

ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເປັນຜູ້ອອກຂໍ້ກຳນົດລະອຽດ ກ່ຽວກັບການຈັດຕັ້ງປະຕິບັດລະບຽບການຂອງ ຜັງເມືອງ.

## ພາກທີ IV ການລົງທຶນ ໃສ່ການກໍ່ສ້າງ ລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ

**ມາດຕາ 31. ຈຸດປະສົງຂອງການລົງທຶນ**

ການລົງທຶນໃສ່ການກໍ່ສ້າງລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກ ແມ່ນເພື່ອອຳນວຍຄວາມສະດວກ ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ປັບປຸງເງື່ອນໄຂການດຳລົງຊີວິດຂອງປະຊາຊົນໃຫ້ດີຂື້ນ ເຊັ່ນ: ການສ້າງຖະໜົນຫົນທາງ, ລະບົບລະບາຍນ້ຳ, ນ້ຳປະປາ, ໄຟຟ້າ, ໂທລະສັບ, ສະໜາມກິລາ, ສວນສາທາລະນະ ແລະ ອື່ນໆ.

**ມາດຕາ 32. ປະເພດຜູ້ລົງທຶນ**

ລັດສົ່ງເສີມທຸກພາກສ່ວນເສດຖະກິດລົງທຶນໃສ່ການກໍ່ສ້າງ ແລະ ພັດທະນາສິ່ງອຳນວຍຄວາມສະດວກຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ເທິງນີ້ ໂດຍມີຮູບການລົງທຶນດັ່ງຕໍ່ໄປນີ້:

- ການລົງທຶນຂອງລັດ;
- ການລົງທຶນຂອງລັດກັບເອກະຊົນ ພາຍໃນ ຫລື ຕ່າງປະເທດ;
- ການລົງທຶນຂອງລັດກັບປະຊາຊົນ;
- ການລົງທຶນຂອງລວມໝູ່;
- ການລົງທຶນຂອງເອກະຊົນພາຍໃນ ຫລືຕ່າງປະເທດ;
- ການລົງທຶນຂອງເອກະຊົນພາຍໃນກັບຕ່າງປະເທດ.

## ພາກທີ V ການຄຸ້ມຄອງ ແລະ ການກວດກາຜັງເມືອງ

### ໝວດທີ 1 ອົງການຄຸ້ມຄອງຜັງເມືອງ

**ມາດຕາ 33. ອົງການຄຸ້ມຄອງຜັງເມືອງ**

ອົງການຄຸ້ມຄອງຜັງເມືອງ ປະກອບມີ :

- ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;

- ພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງແຂວງ, ກໍາແພງນະຄອນ ແລະ ເຂດພິເສດ;

- ອົງການພັດທະນາ ແລະ ບໍລິຫານຕົວເມືອງແຂວງ, ກໍາແພງນະຄອນ ແລະ ເຂດພິເສດ;

- ຫ້ອງການ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງເມືອງ;

- ອໍານາດການປົກຄອງບ້ານ.

## ມາດຕາ 34. ສິດ ແລະ ໜ້າທີ່ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ

ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງຜັງເມືອງ ດັ່ງນີ້:

- ວາງແຜນຍຸດທະສາດ, ສ້າງຜັງເມືອງລະດັບຊາດ, ລະດັບພາກ ແລະລະດັບແຂວງ ເພື່ອສະເໜີລັດຖະບານ;

- ວາງຂໍ້ກໍານົດ, ມາດຕະຖານເຕັກນິກ, ຫລັກການ, ລະບຽບການ, ວິທີການ ກ່ຽວກັບການວາງຜັງເມືອງ;

- ພິຈາລະນາຮັບຮອງເອົາ ຜັງເມືອງລະດັບຕົວເມືອງ ທີ່ຂຶ້ນກັບແຂວງ, ກໍາແພງນະຄອນ ຫລື ເຂດພິເສດ;

- ຕິດຕາມກວດກາ ແລະປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດຜັງເມືອງ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງລັດຖະບານ.

## ມາດຕາ 35. ສິດ ແລະ ໜ້າທີ່ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ແຂວງ, ກໍາແພງນະຄອນ ແລະ ເຂດພິເສດ

ພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ແຂວງ, ກໍາແພງນະຄອນ ແລະ ເຂດພິເສດມີສິດ ແລະ ໜ້າທີ່ໃນການຄຸ້ມຄອງຜັງເມືອງ ດັ່ງນີ້:

- ສ້າງແຜນຜັງເມືອງລະດັບຕົວເມືອງ ເພື່ອສະເໜີໃຫ້ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ພິຈາລະນາຮັບຮອງເອົາ;

- ຈັດຕັ້ງປະຕິບັດ ແລະ ກວດກາການປຸກສ້າງ, ສ້ອມແປງ ແລະກໍ່ສ້າງໃຫ້ຖືກຕ້ອງຕາມຜັງເມືອງ;

- ອອກໃບອະນຸຍາດປຸກສ້າງ ຫລືສ້ອມແປງແລະ ອອກໃບຢັ້ງຢືນຄວາມຖືກຕ້ອງ;

- ຈັດຕັ້ງປະຕິບັດລະບຽບການນໍາໃຊ້ທີ່ດິນ ສໍາລັບເຂດຕົວເມືອງທີ່ຍັງບໍ່ທັນມີຜັງເມືອງໂດຍປະສານສົມທົບກັບຂະແໜງທີ່ດິນ ແລະ ອໍານາດການປົກຄອງທ້ອງຖິ່ນ;

- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

**ມາດຕາ 36. ສິດ ແລະ ໜ້າທີ່ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ**

ອົງການພັດທະນາ ແລະ ບໍລິຫານຕົວເມືອງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີສິດ ແລະ ໜ້າທີ່ດັ່ງນີ້:

- ວາງແຜນຈັດຕັ້ງປະຕິບັດ,ຄຸ້ມຄອງ ແລະ ກວດກາວຽກງານພັດທະນາຕົວເມືອງ;
- ກໍ່ສ້າງ, ປັບປຸງ, ບູລະນະບັນດາໂຄງລ່າງ ແລະ ການບໍລິການຕົວເມືອງ;
- ຄຸ້ມຄອງ ແລະ ຄວບຄຸມການຈັດຕັ້ງປະຕິບັດວຽກງານການປຸກສ້າງ;
- ສະໜອງຂໍ້ມູນຂ່າວສານ ແລະ ເອກະສານເຕັກນິກອັນຈຳເປັນຕ່າງໆ ກ່ຽວກັບຜັງເມືອງ;
- ສ້າງແຫລ່ງລາຍຮັບ ເຂົ້າໃນວຽກງານການສ້າງ ແລະພັດທະນາຜັງເມືອງ;
- ປະຕິບັດສິດ ໜ້າທີ່ອື່ນໆຕາມການມອບໝາຍຂອງເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ຫລື ຫົວໜ້າເຂດພິເສດ.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງຫ້ອງການຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ**

ຫ້ອງການ ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ ມີສິດ ແລະ ໜ້າທີ່ ຄຸ້ມຄອງ, ຈັດຕັ້ງປະຕິບັດຜັງເມືອງຕາມການມອບໝາຍຂອງພະແນກຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງແຂວງ, ກຳແພງນະຄອນ ຫລື ເຂດພິເສດ.

**ມາດຕາ 38. ສິດ ແລະ ໜ້າທີ່ ຂອງອຳນາດການປົກຄອງບ້ານ**

ອຳນາດການປົກຄອງບ້ານມີສິດ ແລະ ໜ້າທີ່ ຊ່ວຍຫ້ອງການ ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງ ໃນການຈັດຕັ້ງປະຕິບັດຜັງເມືອງ, ວຽກງານອະນາໄມບ້ານ, ຄວາມເປັນລະບຽບຮຽບຮ້ອຍຕະຫລອດຮອດວຽກງານການຄຸ້ມຄອງການປຸກສ້າງແລະກໍ່ສ້າງໃນຂອບເຂດບ້ານຂອງຕົນ.

**ມາດຕາ 39. ການເຜີຍແຜ່ຜັງເມືອງ**

ຜັງເມືອງລະດັບຕ່າງໆ ທີ່ຜ່ານການຮັບຮອງແລ້ວ ຕ້ອງໄດ້ເຜີຍແຜ່ໃຫ້ມວນຊົນຮັບຮູ້ຢ່າງກ້ວາງຂວາງ ແລະປະຕິບັດຢ່າງເຂັ້ມງວດ.

## ໝວດທີ 2 ອົງການກວດກາຜັງເມືອງ

**ມາດຕາ 40. ຈຸດປະສົງການກວດກາຜັງເມືອງ**

ການກວດກາການປະຕິບັດຜັງເມືອງ ໃນລະດັບຕ່າງໆ ແມ່ນການກວດກາການນຳໃຊ້ ທີ່ດິນຜັງເມືອງ, ການປຸກສ້າງ ແລະການກໍ່ສ້າງໃຫ້ຖືກຕ້ອງ ຕາມລະບຽບການ ຂອງຜັງເມືອງ ແນໃສ່ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບ, ຄວາມສະດວກ, ຄວາມສະອາດ, ສຸຂານາໄມ ແລະຄວາມສວຍງາມຂອງຕົວເມືອງ.

### ມາດຕາ 41. ອົງການກວດກາຜັງເມືອງ

ອົງການກວດກາຜັງເມືອງ ແມ່ນອົງການດຽວກັນກັບອົງການຄຸ້ມຄອງຜັງເມືອງ ທີ່ໄດ້ກຳນົດໄວ້ໃນມາດຕາ 33 ເທິງນີ້.

### ມາດຕາ 42. ເນື້ອໃນ ແລະ ວິທີການກວດກາຜັງເມືອງ

ການກວດກາຜັງເມືອງ ແມ່ນການກວດກາການປະຕິບັດລະບຽບການຂອງຜັງເມືອງ ເຊັ່ນ: ການນຳໃຊ້ທີ່ດິນຜັງເມືອງ, ການປຸກສ້າງ ແລະ ການກໍ່ສ້າງ,ມາດຕະການຄວາມປອດໄພ,ຄວາມສະອາດ ແລະ ອື່ນໆ.

ການກວດກາ ຜັງເມືອງ ມີ ສາມ ປະເພດ ຄື :

- ການກວດກາຕາມລະບົບປົກກະຕິ ;
- ການ ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ;
- ການ ກວດກາແບບກະທັນຫັນ.

ໃນການກວດກາ ການປະຕິບັດລະບຽບການຂອງຜັງເມືອງອົງການກວດກາຜັງເມືອງ ຕ້ອງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ .

## ໝວດທີ 3 ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 43. ປະເພດຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງ ທີ່ເກີດຂຶ້ນກ່ຽວກັບການປະຕິບັດລະບຽບການຂອງຜັງເມືອງ ມີ ສອງ ປະເພດຄື :

1. ຂໍ້ຂັດແຍ່ງ ທາງດ້ານບໍລິຫານ;
2. ຂໍ້ຂັດແຍ່ງທາງແພ່ງ.

### ມາດຕາ 44. ຂໍ້ຂັດແຍ່ງ ທາງດ້ານບໍລິຫານ

ຂໍ້ຂັດແຍ່ງ ທາງດ້ານບໍລິຫານ ແມ່ນຂໍ້ຂັດແຍ່ງກ່ຽວກັບ ການອອກໃບອະນຸຍາດປຸກສ້າງ ຫລືສ້ອມແປງ,ການຕົກລົງໃຫ້ຄ່າທົດແທນ, ການປຸກສ້າງ ແລະ ການກໍ່ສ້າງທີ່ບໍ່ຖືກຕ້ອງຕາມລະບຽບການຂອງຜັງເມືອງ ແລະ ການລະເມີດອື່ນໆກ່ຽວກັບຜັງເມືອງທີ່ມີລັກສະນະບໍລິຫານ.

ຂໍ້ຂັດແຍ່ງ ທາງດ້ານບໍລິຫານ ຈະຖືກແກ້ໄຂ ຕາມລະບຽບການບໍລິຫານ.

### ມາດຕາ 45. ຂໍ້ຂັດແຍ່ງ ທາງແພ່ງ

ຂໍ້ຂັດແຍ່ງທາງແພ່ງ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການປຸກສ້າງ ຫລື ການກໍ່ສ້າງທີ່ບໍ່ຖືກຕ້ອງຕາມລະບຽບການຂອງຜັງເມືອງ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ບຸກຄົນອື່ນ ຫລື ການຈັດຕັ້ງ ແລະ ການລະເມີດອື່ນໆກ່ຽວ ກັບຜັງເມືອງທີ່ມີລັກສະນະທາງແພ່ງ.

ຂໍ້ຂັດແຍ່ງທາງແພ່ງຈະຖືກແກ້ໄຂດ້ວຍວິທີການໄກ່ເກ່ຍ, ຖ້າຫາກການໄກ່ເກ່ຍບໍ່ໄດ້ຮັບຜົນຜູ້ຖືກເສຍຫາຍມີ ສິດຮ້ອງຟ້ອງຕໍ່ສານ.

## ພາກທີ VI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 46. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ປະກອບສ່ວນເຂົ້າໃນວຽກງານການສ້າງ ແລະ ພັດທະນາຜັງເມືອງ ຫລື ມີຜົນງານດີເດັ່ນໃນການປະຕິບັດລະບຽບການຂອງຜັງເມືອງຈະຖືກຍ້ອງຍໍ ຫລື ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.

### ມາດຕາ 47. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ໃຊ້ແທນຄ່າເສັຍຫາຍ, ປັບໄໝ ຫລື ໄດ້ຮັບໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫລື ໜັກ.

### ມາດຕາ 48. ມາດຕະການສຶກສາອົບຮົມ

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ໃນສະຖານເບົາ ເຊັ່ນ: ວາງວັດຖຸກໍ່ສ້າງ, ຖິ້ມຂີ້ເຫຍື້ອ ຫລື ຖອກສິ່ງເສດເຫລືອຊະຊາຍນອກສະຖານທີ່ກຳນົດໃຫ້, ຕໍ່ເຕີບ ຫລື ຕໍ່ເຕີມທີ່ກວມເອົາສະຖານທີ່ສາທາລະນະ ຫລື ການລະເມີດ ອື່ນໆໃນສະຖານເບົາ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ ພ້ອມທັງໃຫ້ຢຸດເຊົາ ຫລື ຮື້ຖອນການປຸກສ້າງ ຫລື ການກໍ່ສ້າງທີ່ບໍ່ຖືກຕ້ອງຕາມລະບຽບການຂອງຜັງເມືອງ ຕາມແຕ່ກໍລະນີ.

### ມາດຕາ 49. ມາດຕະການໃຊ້ແທນຄ່າເສັຍຫາຍ

ບຸກຄົນ ຫລື ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສັຍຫາຍແກ່ຊັບສິນຂອງລັດ, ຂອງລວມໝູ່ ຫລື ຂອງບຸກຄົນຕ້ອງໄດ້ໃຊ້ແທນຄ່າເສັຍຫາຍຕາມລະບຽບກົດໝາຍ.

### ມາດຕາ 50. ມາດຕະການປັບໃໝ

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປັບໃໝດັ່ງນີ້: ປັບໃໝສິບ ສ່ວນຮ້ອຍຂອງມູນຄ່າສິ່ງກໍ່ສ້າງ ຫລື ສ້ອມແປງທີ່ບໍ່ໄດ້ຮັບອະນຸຍາດ. ໃນກໍລະນີທີ່ການກໍ່ສ້າງ ຫລື ການສ້ອມແປງນັ້ນຫາກບໍ່ຖືກຕ້ອງຕາມຜັງເມືອງແລ້ວ ຜູ້ລະເມີດຍັງຈະຕ້ອງໄດ້ຮື້ຖອນສິ່ງກໍ່ສ້າງທີ່ບໍ່ຖືກຕ້ອງນັ້ນ ຕາມແຕ່ກໍລະນີ.

ບຸກຄົນ ຫລື ການຈັດຕັ້ງ ທີ່ຜ່ານການສຶກສາອົບຮົມຕາມມາດຕາ 48 ຂອງກົດໝາຍສະບັບນີ້ ຫາກຍັງສືບຕໍ່ການລະເມີດດັ່ງກ່າວ ກໍຈະຖືກປັບໃໝ.

## ມາດຕາ 51. ມາດຕະການທາງອາຍາ

ບຸກຄົນໃດ ນັບທັງປະຊາຊົນ ແລະ ລັດຖະກອນທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເຊັ່ນ: ນຳໃຊ້ເອກະສານປອມ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ປະຕິບັດໜ້າທີ່ດ້ວຍຄວາມເລີ່ນເລີ້ ຊຶ່ງພາໃຫ້ເກີດຄວາມເສັຍຫາຍຕໍ່ຊີວິດ, ສຸຂະພາບຂອງບຸກຄົນ ຫຼືຕໍ່ຊັບສິນ ຂອງລັດ ຫລື ລວມໝູ່, ບໍ່ປະຕິບັດມາດຕະການຄວາມປອດໄພ ຊຶ່ງພາໃຫ້ຄົນເສັຍຊີວິດ ຫລື ເສັຍສຸຂະພາບ ຈະຖືກລົງໂທດຕາມກົດໝາຍອາຍາ.

## ມາດຕາ 52. ມາດຕະການໂທດເພີ້ມ

ນອກຈາກໂທດທີ່ໄດ້ກຳນົດໄວ້ ໃນມາດຕາ 48, 49, 50 ແລະ 51 ເທິງນີ້ແລ້ວ ຜູ້ລະເມີດທີ່ໄດ້ກໍ່ຄວາມເສັຍຫາຍຢ່າງຮ້າຍແຮງຕໍ່ຊັບສິນຂອງລັດ, ຂອງລວມໝູ່ ຫລື ຂອງບຸກຄົນ ຍັງຈະຖືກປະຕິບັດມາດຕະການໂທດເພີ້ມ ອີກເຊັ່ນ: ໂຈະກິດຈະການ, ຖອນໃບອະນຸຍາດ, ຮື້ຖອນສິ່ງກໍ່ສ້າງ ຫລື ສ້ອມແປງທີ່ບໍ່ຖືກຕ້ອງນັ້ນຕາມແຕ່ກໍລະນີ .

# ພາກທີ VII ບົດບັນຍັດສຸດທ້າຍ

## ມາດຕາ 53. ການຈັດຕັ້ງປະຕິບັດ

ມອບໃຫ້ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ເຜີຍແຜ່ ແລະຈັດຕັ້ງປະຕິບັດ ກົດໝາຍສະບັບນີ້ .

## ມາດຕາ 54. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ 90 ວັນ ນັບແຕ່ມື້ປະທານ ປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ .

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 3 ເມສາ 1999.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ